ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**BANQUE POUR LE COMMERCE EXTERIEUR LAO PUBLIC**

ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່ ເລກທີ 03 11/ທຄຕລ.2026

ນະຄອນຫຼວງວຽງຈັນ, ວັນທີ 30 JAN 2026

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ/ຫ້າງຮ້ານຕົວແທນຈຳໜ່າຍ ເຄື່ອງໃຊ້ຫ້ອງການ, ເຄື່ອງໄອທີ ຢູ່ໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ເຊີນເຂົ້າຮ່ວມການປະມູນລາຄາສິນຄ້າ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາບໍລິສັດ/ຫ້າງຮ້ານຕົວແທນ ຈຳໜ່າຍເຄື່ອງໃຊ້ຫ້ອງການ, ເຄື່ອງໄອທີ ເພື່ອເຂົ້າຮ່ວມການປະມູນລາຄາ ຕາມລາຍລະອຽດລຸ່ມນີ້:

| ລ/ດ | ລາຍການ | ຈຳນວນ | ຮູບພາບ |
|---|---|---|---|
| 1 | **Iphone 17 Promax_256 GB** (ສູນໄທ) | **8 ໜ່ວຍ** |  |
| 2 | **Iphone 17 Pro_256 GB** (ສູນໄທ) | **6 ໜ່ວຍ** |  |
| 3 | **Iphone Air 256 GB** (ສູນໄທ) | **2 ໜ່ວຍ** |  |
| 4 | **Ipad Air 11-inch/128 GB** | **3 ໜ່ວຍ** |  |

**ໝາຍເຫດ:**

1. ຜູ້ສະໜອງສາມາດເຂົ້າຮ່ວມປະມູນທຸກລາຍການ ຫຼື ລາຍການໃດໜຶ່ງກໍ່ໄດ້, ສ່ວນການພິຈາລະນາແມ່ນ ທຄຕລ ຈະຄັດເລືອກ ແຍກເປັນແຕ່ລະລາຍການ.
2. ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

➢ **ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຮ່ວມຍື່ນຊອງປະມູນຕ້ອງປະກອບເອກະສານ ດັ່ງນີ້:**

- **<u>ເອກະສານຊອງທີ</u> 1**:

1. ປະກອບເອກະສານໃນນາມນິຕິບຸກຄົນ ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປະຈຳປີ 2022, 2023 ແລະ 2024.
2. ຜູ້ສະໜອງຕ້ອງລະບຸລາຍລະອຽດສິນຄ້າ ພ້ອມທັງລະບຸເງື່ອນໄຂຕ່າງໆໃຫ້ຄົບຖ້ວນ ແລະ ກົງກັບຄວາມຕ້ອງ ການໃນຕາຕະລາງຂ້າງເທິງນີ້, ແຫຼ່ງຜະລິດສິນຄ້າ, ລະບຸໄລຍະເວລາໃນການຮັບປະກັນ, ລະບຸໄລຍະການຜະລິດ, ຜົນງານຜ່ານມາທີ່ເຄີຍສະໜອງສິນຄ້າປະເພດດັ່ງກ່າວໃຫ້ພາກສ່ວນອື່ນ (ຕາມແບບຟອມຄັດຕິດແຈ້ງເຊີນ).
3. ເອກະສານເງື່ອນໄຂ ຂໍ້ 1 ແລະ 2 ແມ່ນ ສົ່ງຟາຍ pdf ເຂົ້າມາທີ່ Email: procurement@bcel.com.la, ສົ່ງກ່ອນວັນພຸດ, ທີ 11/02/2026 ເວລາ 11:00 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ຊັ້ນ 4C.

- **<u>ເອກະສານຊອງທີ 2 (ປິດຊອງ)</u>**:

1. ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂ ຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາ ໃນວັນອັງຄານ, ທີ **19/02/2026 ເວລາ 09:00** ໂມງ. ສະນັ້ນ, ຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົວເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 05 ຕຶກ C.
2. ໃບສະເໜີລາຄາໃຫ້ລະບຸ ລາຄາ/ໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບ, ພ້ອມທັງລະບຸມື້ໝົດກຳນົດເວລາໃນໃບສະເໜີລາຄາດັ່ງກ່າວ (Expire date) ຢ່າງໜ້ອຍ 30 ວັນລັດຖະການ.
3. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກ ໂດຍທະນາຄານພາຍໃນປະເທດ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 19/05/2026) ຫຼື ແຊັກທີ່ວີຊ້າແລ້ວ (ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນພາຍໃນ 15 ວັນ.

**<u>ໝາຍເຫດ</u>**: ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

➢ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຜູ້ຊະນະການປະມູນຕ້ອງໄດ້ ມີຄວາມສາມາດຈັດສົ່ງສິນຄ້າ ຈຳນວນທັງໝົດສຳເລັດພາຍໃນ 30 ວັນ ນັບຈາກມື້ໄດ້ຮັບໜັງສືສັ່ງຊື້.
- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ, ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.

- ການຊໍາລະແມ່ນຈ່າຍເງິນງວດດຽວ 100% ຕາມມູນຄ່າສັ່ງຊື້ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ, ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນ 30 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອໍານວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນ.ສາຍສະໝອນ ຈັນທະຈັກ

ຕິດຕໍ່ສອບຖາມຂໍ້ມູນເພີ່ມຕື່ມ:

021 213200 ຕໍ່ 414

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ ......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (Server ທີ່ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (ເລກທີ/ລົງວັນທີ) | (ເລກທີ/ລົງວັນທີ) | (ເລກທີ/ລົງວັນທີ) | .... ປີ | (ໃຫ້ລະບຸ) | | | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ........................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: